


ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

KFW

# ໂຄງການສະໜັບສະໜູນການເງິນ ອາຊີວະສຶກສາ (VEFF)

## ຜູ້ຮຽນວິຊາຊີບ

- **ຮຽນຮູ້ຈາກການເຮັດຕົວຈິງ**: **ໄດ້ຮັບປະສົບການໃນການເຮັດວຽກຕົວຈິງ**ໃນຂະນະທີ່ຮຽນ, ເຮັດໃຫ້ຜູ້ຮຽນມີຄວາມສາມາດແຂ່ງຂັນໃນຕະຫຼາດແຮງງານ.
- **ໄດ້ຮັບເງິນອຸດໜູນໃນຂະນະຮຽນ**: ໂຄງການ VEFF **ອຸດໜູນເງິນເບ້ຍລ້ຽງ, ປະກັນໄພ ອຸປະຕິເຫດ ແລະ ສຸຂະພາບ ໃນເວລາຝຶກແອບປະຕິບັດຕົວຈິງ** ແລະ ຜູ້ຮຽນອາດຈະມີລາຍໄດ້ອື່ນໆອີກ ໃນຂະນະທີ່ຮຽນ.
- **ການມີວຽກເຮັດງານທໍາໄວຂຶ້ນ**: **ເພີ່ມໂອກາດໃນການມີວຽກເຮັດງານທໍາທັນທີ** ຫຼັງຈາກ ຮຽນຈົບ.

## ສະຖານປະກອບການ

- **ຄວາມຮູ້ ແລະ ທັກສະທີ່ເໝາະສົມ**: ຖ່າຍທອດ ທິດສະດີ ແລະ ຝຶກແອບທັກສະ ໃຫ້ຜູ້ຮຽນວິຊາຊີບ ທີ່ແທດເໝາະກັບຄວາມຕ້ອງການ ຂອງສະຖານປະກອບການ.
- **ພັດທະນາພະນັກງານຂອງສະຖານປະກອບການ**: ສະຖານປະກອບການຈະໄດ້ກໍາລັງແຮງງານ ລຸ້ນໃໝ່ທີ່ສອດຄ່ອງກັບຄວາມຕ້ອງການ ເພາະທ່ານເປັນຜູ້ຝຶກແອບເຂົາເຈົ້າຕາມຂະບວນການເຮັດວຽກ ຂອງທ່ານ, ໃນຂະນະດຽວກັນກໍ່ໄດ້ສັງເກດ ແລະ ປະເມີນ ຈັນຍາບັນ ໃນການເຮັດວຽກຂອງຜູ້ຮຽນວິຊາຊີບ ໄປພ້ອມກັນ ຈຶ່ງເຮັດໃຫ້ການຕັດສິນໃຈຮັບເອົາເຂົາເຈົ້າ ເຂົ້າຮ່ວມເຮັດວຽກໄດ້ດີກວ່າ ແລະ ກໍ່ມີຄວາມ ສ່ຽງໜ້ອຍທີ່ສຸດ.
- **ເພີ່ມຜົນຜະລິດ & ປະສິດທິພາບ**: ນໍາໃຊ້ຜູ້ຮຽນວິຊາຊີບ ໃນລະຫວ່າງການຝຶກແອບປະຕິບັດວຽກ ປະຈໍາວັນຂອງພວກເຂົາ ປະກອບສ່ວນເຂົ້າໃນທຸລະກິດຂອງທ່ານ.
- **ສ້າງກໍາລັງແຮງງານທີ່ສັດຊື່:** ອາຊີວະສຶກສາແບບຄວບຄູ່ ສົ່ງເສີມຄວາມສັດຊື່ ແລະ ໝັ້ນຄົງ ເນື່ອງຈາກ ຜູ້ຮຽນວິຊາຊີບມີສ່ວນຮ່ວມຢ່າງຕັ້ງໜ້າໃນຄວາມສໍາເລັດຂອງອົງກອນ.

## ສະຖານອາຊີວະສຶກສາ

- **ມີໂອກາດຮັບນັກຮຽນຮຽນວິຊາຊີບຫຼາຍຂຶ້ນ:** ການຈັດ ການຮຽນ-ການສອນ ຕາມຮູບແບບ ອສຄ ຈະເຮັດໃຫ້ສະຖານອາຊີວະສຶກສາຂອງທ່ານໄດ້ປຽບໃນການຮັບນັກຮຽນເຂົ້າຮຽນໃນປະລິມານທີ່ຫຼາຍຂຶ້ນ.
- **ມີຄວາມຮ່ວມມືກັບສະຖານປະກອບການ:** ອາຊີວະສຶກສາແບບຄວບຄູ່ ຈະເປັນການເຊື່ອມຕໍ່ ການສະໜອງຂອງສະຖານອາຊີວະສຶກສາ ແລະ ຄວາມຕ້ອງການຂອງຕະຫລາດແຮງງານ.
- **ພາບພົດທີ່ດີຂຶ້ນ:** ພາບພົດຂອງສະຖານອາຊີວະສຶກສາ ໄດ້ຮັບການປັບປຸງດີຂຶ້ນ ເນື່ອງຈາກວ່າຜູ້ຮຽນ ມີທັກສະສູງທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ມີວຽກເຮັດງານທໍາ.
- **ໄດ້ຮັບການສະໜັບສະໜູນ:** ໂຄງການ VEFF ສະໜັບສະໜູນການປັບປຸງສະຖານອາຊີວະສຶກສາ ໂດຍການສະໜອງ ອຸປະກອນເຕັກນິກ, ເຄື່ອງມື ແລະ ວັດຖຸ ຮັບໃຊ້ການຝຶກແອບປະຕິບັດຕົວຈິງ ຕາມເງື່ອນໄຂທີ່ຮັບປະກັນວ່າມີຄວາມເໝາະສົມກັບຄວາມຕ້ອງການຂອງສາຂາອາຊີບນັ້ນໆ.

## ໂຄງການສະໜັບສະໜູນການເງິນອາຊີວະສຶກສາ

ໂຄງການສະໜັບສະໜູນການເງິນອາຊີວະສຶກສາ (VEFF) ແມ່ນໂຄງການຮ່ວມມືທາງ ດ້ານການເງິນ ລະຫວ່າງ ສປປ ລາວ ເຊິ່ງຈັດຕັ້ງປະຕິບັດໂດຍ ກົມອາຊີວະສຶກສາ, ກະຊວງ ສຶກສາທິການ ແລະ ກິລາ ແລະ ສສ ເຢຍລະມັນ ໂດຍຜ່ານທາງທະນາຄານພັດທະນາ ເຢຍລະມັນ (KfW).

ເປົ້າໝາຍຂອງໂຄງການແມ່ນເພື່ອປັບປຸງຄຸນນະພາບ ຂອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຢູ່ໃນ ສປປ ລາວ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດ ແຮງງານ ແລະ ປະສົມປະສານ ການພັດທະນາອາຊີວະສຶກສາທີ່ມີຄຸນນະພາບໄປຄຽງຄູ່ ກັບການສົ່ງເສີມການມີວຽກເຮັດງານທໍາຂອງຜູ້ຮຽນຈົບວິຊາຊີບຈາກສະຖານອາຊີວະສຶກສາ ໂດຍຜ່ານການປະຕິບັດ ການຮຽນ-ການສອນ ອາຊີວະສຶກສາແບບຄວບຄູ່ (DCT).

ໂຄງການ VEFF ໃຫ້ການສະໜັບສະໜູນດ້ານການເງິນແກ່ບັນດາ ສະຖານອາຊີວະສຶກສາ, ສະຖານປະກອບການ ແລະ ຜູ້ຮຽນວິຊາຊີບ.

## ການຮຽນ-ການສອນ ອາຊີວະສຶກສາແບບຄວບຄູ່ (ອສຄ)

ການຮຽນ-ການສອນ ອາຊີວະສຶກສາແບບຄວບຄູ່ (ອສຄ) ແມ່ນຮູບແບບ ການຮຽນ-ການສອນ ທີ່ຜູ້ຮຽນວິຊາຊີບໄດ້ຮັບຜົນປະໂຫຍດສູງ ໂດຍສາມາດຮຽນໄດ້ຢູ່ສອງບ່ອນຄື: ຮຽນທິດສະດີ ແລະ ຝຶກແບບທັກສະພື້ນຖານ ຢູ່ສະຖານອາຊີວະສຶກສາ ແລະ ຝຶກແອບທັກສະທີ່ຈໍາເປັນ ສໍາລັບການມີວຽກເຮັດງານທໍາຕາມທີ່ຕະຫຼາດແຮງງງານຕ້ອງການ ໂດຍຜ່ານການປະຕິບັດ ຕົວຈິງ ຢູ່ສະຖານປະກອບການການ.

## ການສະໜັບສະໜູນຈາກໂຄງການ VEFF

**ກະລຸນາຕິດຕໍ່ ຫ້ອງການຄຸ້ມຄອງໂຄງການ VEFF Email: office@veff-laos.org,**
**ທ່ານ ສົມລິດ ວິຣິວົງ ຮອງຫົວໜ້າບໍລິຫານໂຄງການ, Tel: +856 20 22 209 945**
**Facebook page: https://www.facebook.com/vefflaos2**
**ສໍາລັບໜັງສືແຈ້ງເຈດຈໍານົງຂໍການສະໜັບສະໜູນໃນຮອບຕໍ່ໄປ ສາມາດດາວໂຫລດໄດ້:**
**https://dct.lncci.la/lo/business/dct-financing/**

plan co

LGDC